*ເຈັ້ຍຂໍ້ມູນກ່ຽວກັບພະຍາດຕິດຕໍ່*

# ໂຣກເຍື່ອຫຸ້ມສມອງອັກເສບ

*ໂຣກເຍື່ອຫຸ້ມສມອງອັກເສບເກີດ ຂຶ້ນຍ້ອນການຕິດເຊື້ອຈາກແບັກທີເຣັຍ ແລະສາມາດນຳໄປສູ່ການເຈັບປ່ວຍຢ່າງຮ້າຍແຮງ. ອັນນີ້ແມ່ນ ໂຣກທີ່ບໍ່ຄ່ອຍ ມີຄົນເປັນ ຢູ່ໃນຣັດ ນຊວ, ແຕ່ວ່າຈະເກີດ ຂຶ້ນເລື້ອຍກວ່າ ໃນຊ່ວງຣະດູໜາວແລະຣະດູໃບໄມ້ປົ່ງ. ເດັກອາຍຸນ້ອຍ, ເດັກ ນ້ອຍ, ວັຍລຸ້ນ ແລະ ຊາວໜຸ່ມແມ່ນ ພວກທີ່ສ່ຽງຕໍ່ການຕິດໂຣກນີ້ຫຼາຍທີ່ສຸດ. ການປິ່ນປົວແຕ່ຕົ້ນໆແມ່ນຈຳເປັນທີ່ສຸດ.*

**ສະບັບປັບປຸງແກ້ໄຂ:** 17 ມະກະຣາ 2008

## ໂຣກເຍື່ອຫຸ້ມສມອງອັກເສບແມ່ນຫຍັງ?

- ໂຣກເຍື່ອຫຸ້ມສມອງອັກເສບແມ່ນພະຍາດຮ້າຍແຮງຊນິດນຶ່ງຊຶ່ງຕາມປົກກະຕິແມ່ນເກີດຂຶ້ນຍ້ອນເຍື່ອສມອງອັກເສບ (ການອັກເສບຂອງເນື້ອເຍື່ອທີ່ຫຸ້ມສມອງແລະເສັ້ນກະດູກສັນຫຼັງ) ແລະ/ຫຼື ໂລຫິດເປັນພິດ (ເລືອດເປັນພິດ). ພາວະຂອງ ພະຍາດທີ່ບໍ່ຄ່ອຍມີຄົນເປັນກັນນີ້ ຮວມມີ ປະດົງເຂົ້າຂໍ້ (ຂໍ້ອັກເສບ), ປອດບວມ (ປອດອັກເສບ) ແລະ ຕາອັກເສບ (ການອັກເສບຂອງເນື້ອເຍື່ອໜ່ວຍຕາ ແລະ ໜັງຕາ).
- ຄົນທີ່ເປັນໂຣກເຍື່ອຫຸ້ມສມອງອັກເສບນີ້ສາມາດລົ້ມເຈັບໜັກລົງຢ່າງໄວທີ່ສຸດ. ຫ້າເຖິງສິບເປີເຊັນຂອງຄົນ ທີ່ເປັນໂຣກເຍື່ອຫຸ້ມສມອງອັກເສບຈະເສັຍຊີວິດ, ເຖິງແມ່ນວ່າຈະໄດ້ຮັບການ ປິ່ນປົວໃນທັນທີທັນໃດກໍຕາມ.
- ຄົນເປັນໂຣກນີ້ມີຈຳນວນນ້ອຍລົງໃນບໍ່ເທົ່າໃດປີທີ່ຜ່ານມານີ້ ແລະ ປັດຈຸບັນນີ້ ໃນຣັດ ນຊວ ຈະມີປະມານ 100 ຫາ 130 ຣາຍ ທີ່ເປັນໂຣກນີ້ໃນແຕ່ລະປີ. ຣະດູໜາວແລະຣະດູໃບໄມ້ປົ່ງແມ່ນຊ່ວງ ທີ່ຄົນເປັນໂຣກເຍື່ອຫຸ້ມສມອງອັກເສບຫຼາຍທີ່ສຸດ.
- ໂຣກເຍື່ອຫຸ້ມສມອງອັກເສບເກີດຂຶ້ນຍ້ອນການຕິດເຊື້ອຈາກແບັກທີເຣັຍຊຶ່ງເອີ້ນວ່າ meningococcus ແລະຢູ່ໃນແບັກທີເຣັຍຊນິດນີ້ ກໍມີຫຼາຍໆກຸ່ມ. ຢູ່ໃນຣັດ ນຊວ, ກຸ່ມທີ່ແຜ່ຫຼາຍທີ່ສຸດກໍຄືກຸ່ມ serogroup B. ປັດຈຸບັນ ຍັງບໍ່ທັນມີຢາວັກຊີນປ້ອງກັນ serogroup B ໃນ ຣັດ ນຊວ ນີ້ໄດ້ເທື່ອ. ເມື່ອທຽບກັບ serogroup B, ພະຍາດທີ່ເກີດຈາກ serogroup C ນັບວ່າຄົນເປັນນ້ອຍຫຼາຍ ໃນຣັດ ນຊວ, ໂດຍສະເພາະຫຼັງຈາກທີ່ຄົ້ນພົບຢາວັກຊີນສັກ ປ້ອງກັນໂຣກເຍື່ອ ຫຸ້ມສມອງອັກເສບ ຊນິດ C ໄດ້.

- ລະຫວ່າງ 5 ເຖິງ 25 ເປີເຊັນຂອງຄົນທີ່ຖືເຊື້ອແບັກທີເຣັຍໂຣກເຍື່ອຫຸ້ມສມອງອັກເສບໃນດັງ ແລະຮູຄໍ ໂດຍບໍ່ສໍ່ສະແດງອາການໃດໆຫຼືເກີດເຈັບປ່ວຍແຕ່ຢ່າງໃດ.

## ໂຣກນີ້ມີອາການຢ່າງໃດແດ່?

- ອາການຂອງໂຣກເຍື່ອຫຸ້ມສມອງອັກເສບນັ້ນບໍ່ຈຳເພາະ ແຕ່ວ່າອາດຮວມມີ ການເປັນໄຂ້ໃນທັນທີ, ເຈັບຫົວ, ປວດຕົ້ນຄໍ, ເຈັບຕາມຂໍ້, ເກີດເປັນຜື່ນຈຸດສີແດງຊ້ຳ ຫຼື ເປັນຮອຍຊ້ຳ, ບໍ່ມັກແສງແຈ້ງ, ປຸ້ນທ້ອງ ແລະ ຮາກ.
- ອາການອາດຈະປາກົດພ້ອມກັນທັງໝົດບາດດຽວ.
- ເດັກນ້ອຍອາດມີອາການບໍ່ຊັດແຈ້ງ. ອາການຕ່າງໆອາດຮວມມີ ຮູ້ສຶກຫິນຫວຍ, ປຸກໃຫ້ຕື່ນຍາກ, ຮ້ອງໄຫ້ສຽງແຫຼມແຈດ, ແລະ ບໍ່ຍອມກິນເຂົ້າ.
- ຜື່ນທີ່ເກີດຈາກໂຣກເຍື່ອຫຸ້ມສມອງອັກເສບຕາມປົກກະຕິຈະບໍ່ຫາຍໄປເມື່ອເອົາມືເນັ້ນຄ່ອຍໆເທິງຜິວໜັງ. ຄົນທີ່ເປັນໂຣກ ເຍື່ອຫຸ້ມສມອງອັກເສບບໍ່ຈຳເປັນວ່າຈະເປັນຜື່ນກັນທຸກໆຄົນ ຫຼື ບາງຄັ້ງຜື່ນອາດຈະເກີດຂຶ້ນໃນຊ່ວງຣະຍະຫຼັງຂອງອາການ.
- ບາງຄັ້ງ ອາການທີ່ເຫັນເປັນເລື້ອຍໆກໍອາດຕິດຕາມດ້ວຍອາການທີ່ບໍ່ຊັດແຈ້ງເຊັ່ນເຈັບຂາ, ມືເຢັນຊືດ ແລະ ຜິວໜັງປ່ຽນສີ.
- ໂຣກເຍື່ອຫຸ້ມສມອງອັກເສບບາງເທື່ອກໍຕິດຕາມດ້ວຍອາການຕິດເຊື້ອຢ່າງອື່ນໃນລະບົບຫາຍໃຈ.
- ຄົນທີ່ມີອາການຂອງໂຣກເຍື່ອຫຸ້ມສມອງອັກເສບຕ້ອງໄປຫາໝໍໂດຍດ່ວນທີ່ສຸດ, ໂດຍສະເພາະຖ້າອາການໄຂ້ບໍ່ຫຼຸດລົງ, ຫິນຫວຍ, ເມົາ ຫຼື ງ່ວງນອນ, ຫຼື ໃນກໍຣະນີຂອງເດັກຖ້າລາວບໍ່ກິນຕາມປົກກະຕິ.

## ໂຣກນີ້ແຜ່ຜາຍຢ່າງໃດ?

- ແບັກທີເຣັຍໂຣກເຍື່ອຫຸ້ມສມອງອັກເສບຈະບໍ່ແຜ່ຜາຍໂດຍງ່າຍຈາກຄົນຕໍ່ຄົນ ແລະ ເຊື້ອແບັກທີເຣັຍກໍບໍ່ສາມາດມີຊີວິດ ຢູ່ໄດ້ ນອກຮ່າງກາຍຂອງຄົນ.
- ເຊື້ອແບັກທີເຣັຍຊນິດນີ້ສາມາດແຜ່ຜາຍໃຫ້ກັນໂດຍນ້ຳຈາກດ້ານຫຼັງໃນຮູດັງແລະຮູຄໍ. ການແຜ່ຜາຍແບບນີ້ຕ້ອງມີການ ຕິດຕໍ່ກັນໃກ້ຊິດແລະເປັນເວລາຍາວນານ ກັບຜູ້ທີ່ຖືເຊື້ອແບັກທີເຣັຍ ຊຶ່ງຕາມປົກກະຕິແລ້ວ ກໍມີສຸຂພາບດີ. ຕົວຢ່າງ ຂອງ ການ “ຕິດຕໍ່ກັນໃກ້ຊິດແລະເປັນເວລາຍາວນານ” ແມ່ນຜູ້ທີ່ຢູ່ເຮືອນດຽວກັນ ຫຼື ການຈູບແບບດູດດື່ມ (ເລິກຊຶ້ງ).
- ເຊື້ອແບັກທີເຣັຍໂຣກເຍື່ອສມອງອັກເສບບໍ່ແຜ່ຜາຍກັນໂດຍງ່າຍຈາກການດື່ມນ້ຳ, ກິນອາຫານ ຫຼື ສູບຢາຮ່ວມກັນ.

## ແມ່ນໃຜແດ່ທີ່ສ່ຽງຕໍ່ການຕິດພະຍາດນີ້?

ເຖິງແມ່ນວ່າໂຣກນີ້ສາມາດເກີດຂຶ້ນກັບທຸກຄົນໄດ້, ແຕ່ວ່າຜູ້ທີ່ມີຄວາມສ່ຽງສູງມີຄື:

- ຄົນທີ່ຢູ່ເຮືອນດຽວກັນກັບຄົນເຈັບທີ່ເປັນໂຣກເຍື່ອຫຸ້ມສມອງອັກເສບ
- ເດັກອາຍຸນ້ອຍ, ເດັກນ້ອຍ, ວັຍລຸ້ນ ແລະ ຄົນໜຸ່ມ
- ຄົນທີ່ຢູ່ໃກ້ຄວັນຢາສູບແລະຢູ່ໃກ້ຄົນສູບຢາ

- ຄົນທີ່ຈູບປາກແບບດູດດື່ມ (ເລີກຊຶ້ງ) ກັບຄູ່ຫຼາຍກວ່າຄົນນຶ່ງຂຶ້ນໄປ
- ຄົນທີ່ຫາກໍເປັນເຈັບປ່ວຍຍ້ອນພະຍາດທີ່ກ່ຽວກັບທາງເດີນຫາຍໃຈດ້ານເທິງ ຕິດເຊື້ອໄວຣັສ
- ຜູ້ທີ່ເດີນທາງໄປປະເທດທີ່ມີຄົນເປັນພະຍາດເຍື່ອຫຸ້ມສມອງຢ່າງແຜ່ຫຼາຍ.
- ຄົນທີ່ມ້າມບໍ່ທຳງານຫຼືຜູ້ທີ່ເປັນພະຍາດທີ່ຄົນບໍ່ຄ່ອຍເປັນ.

ຜູ້ທີ່ຢູ່ໃກ້ຊິດກັບຄົນທີ່ເປັນໂຣກເຍື່ອຫຸ້ມສມອງອັກເສບມີການສ່ຽງຕິດພະຍາດແຕ່ພຽງນ້ອຍ. ພະນັກງານດູແລສຸຂພາບບໍ່ຢູ່ໃນ ສະພາບສ່ຽງສູງຂຶ້ນ ນອກຈາກວ່າເຂົາເຈົ້າໄດ້ຕ້ອງຊູນກັບນ້ຳຈາກ ດັງແລະ ຄໍຫອຍຂອງຄົນເຈັບ (ຕົວຢ່າງ ຖ້າເຂົາເຈົ້າໄດ້ຊ່ວຍ ຄົນເຈັບໃຫ້ຟື້ນດ້ວຍການເປົ່າປາກ ຫຼື ສອດທໍ່ຫຼອດເຂົ້າ ໄປທາງໃນຄົນເຈັບໂດຍບໍ່ໃຊ້ຜ້າອັດດັງ).

## ຈະປ້ອງກັນໂຣກນີ້ໄດ້ຢ່າງໃດ?

ການເຊົາສູບຢາຈະຊ່ວຍຫຼຸດຜ່ອນການແຜ່ພາຍເຊື້ອແບັກທີເຣັຍ. ໃຫ້ຮັກສາເຮືອນແລະຣົດໃຫ້ຢູ່ໃນສະພາບ ປອດຄວັນຢາ.

ມີຢາສັກວັກຊີນສອງແບບ:

- *ຢາວັກຊີນ Meningococcal C conjugate* ປ້ອງກັນໂຣກເຍື່ອຫຸ້ມສມອງອັກເສບກຸ່ມ C. ຂໍແນະນຳໃຫ້ ເດັກນ້ອຍທຸກຄົນເມື່ອຮອດອາຍຸນຶ່ງປີ (ຊຶ່ງແມ່ນພາກສ່ວນນຶ່ງຂອງລາຍການສັກຢາກັນ ໂຣກທົ່ວໄປ) ແລະ ສຳລັບຄົນທີ່ເຄີຍເປັນໂຣກ ເຍື່ອຫຸ້ມສມອງອັກເສບສັກຢານີ້.
- ຢາວັກຊີນ *Meningococcal polysaccharide* ປ້ອງກັນໂຣກກຸ່ມ A, C, Y ແລະ W135. ຂໍແນະນຳໃຫ້ຜູ້ທີ່ຈະເດີນທາງໄປປະເທດທີ່ມີໂຣກເຍື່ອຫຸ້ມສມອງອັກເສບແຜ່ລະບາດ ສັກຢານີ້ (ເຊັ່ນ ປະເທດແຖບ ລຸ່ມ-ຊາຮາຣານ ອັຟຣິກາ) ແລະ ຄົນທີ່ຈະເດີນທາງໄປສແວງບຸນປະກອບພິທີ Hajj ທີ່ ປະເທດ ຊາອຸດິ ອາຣາເບັຍ.

ຢາວັກຊີນທັງສອງຢ່າງນີ້ ຄວນສັກໃຫ້ພະນັກງານທີ່ເຮັດວຽກຢູ່ຫ້ອງທົດລອງຊຶ່ງຕ້ອງກ່ຽວຂ້ອງກັບ meningococci ແລະຄົນທີ່ມ້າມບໍ່ທຳງານ ແລະ ຄົນທີ່ມີບັນຫາທາງສຸຂພາບບາງຢ່າງ.

ເນື່ອງຈາກວ່າວັກຊີນເຫຼົ່ານັ້ນບໍ່ສາມາດປ້ອງກັນໂຣກເຍື່ອຫຸ້ມສມອງອັກເສບກຸ່ມ B ຊຶ່ງຄົນເປັນຫຼາຍຢູ່ໃນຣັດ ນຊວ, ຜູ້ທີ່ສັກຢາກັນໄວ້ແລ້ວກໍຕາມ ກໍຄວນໝັ່ນສັງເກດເບິ່ງອາການແລະສິ່ງສໍ່ສະແດງ ຂອງໂຣກ ເຍື່ອຫຸ້ມສມອງອັກເສບນີ້ເຊັ່ນກັນ.

## ຈະກວດຫາໂຣກນີ້ໄດ້ຢ່າງໃດ?

ການກວດຫາໂຣກນີ້ແມ່ນອີງໃສ່ປວັດດ້ານສຸຂພາບແລະກວດຮ່າງກາຍຂອງຄົນເຈັບ. ການກວດແບບນີ້ ບາງເທື່ອກໍເປັນການຍາກ ໃນລະຍະເລີ້ມຕົ້ນຂອງພະຍາດ. ການຢັ້ງຢືນພະຍາດຕ້ອງໄດ້ທຳການວິຈັຍ ເບິ່ງຕົວຢ່າງຈາກຄົນເຈັບ, ຮວມທັງ ຕົວຢ່າງເລືອດ, ນ້ຳຈາກສັນຫຼັງຕໍ່ຫາສມອງໃຫຍ່ ຫຼືຕົວຢ່າງຜີວໜັງ. ລະຍະເວລາກ່ອນຈະໄດ້ຜົນຈາກການວິຈັຍກໍຂຶ້ນຢູ່ກັບແຕ່ລະກໍຣະນີ ແລະ ຂຶ້ນກັບວ່າ ມີການວິຈັຍແບບໃດແດ່.

## ຈະປິ່ນປົວໂຣກນີ້ໄດ້ຢ່າງໃດ?

ຄົນເຈັບຈາກໂຣກເຍື່ອຫຸ້ມສມອງອັກເສບຕ້ອງໄດ້ຮັບການປິ່ນປົວຢ່າງຮີບດ່ວນ ດ້ວຍຢາປະຕິຊີວະນະ ແລະ ສ່ວນຫຼາຍການປິ່ນປົວ ແມ່ນໄດ້ເລີ້ມຕົ້ນກ່ອນໄດ້ຮັບການຢັ້ງຢືນຈາກຜົນການວິຈັຍ.

## ຜແນກສາທາຣະນະສຸກມີທ່າທີຢ່າງໃດຕໍ່ໂຣກນີ້?

ໂຮງໝໍແລະຫ້ອງທົດລອງຕ້ອງລາຍງານກໍຣະນີຂອງໂຣກເຍື່ອຫຸ້ມສມອງອັກເສບໃຫ້ຜແນກສາທາຣະນະສຸກທ້ອງຖິ່ນຊາບ. ພະນັກງານ ຂອງຜແນກ PHU ນີ້ຈະເຮັດວຽກຮ່ວມກັບທ່ານໝໍ, ຄົນເຈັບຫຼືຄອບຄົວຂອງເຂົາເຈົ້າ ເພື່ອໃຫ້ຮູ້ເຖິງຜູ້ທີ່ໄດ້ ຢູ່ໃກ້ຊິດ ກັບ ຄົນເຈັບ (ຂຶ້ນກັບລະຍະແລະພາວະຂອງການຮັບເຊື້ອ, ຄົນພວກນີ້ເອີ້ນວ່າຜູ້ພົວພັນ). ທາງຜແນກ ຈະໃຫ້ຂໍ້ມູນກ່ຽວກັບໂຣກເຍື່ອຫຸ້ມ ສມອງອັກເສບນີ້. ທາງຜແນກຈະຕິດຕາມຫາ ຜູ້ພົວພັນກຸ່ມນ້ອຍໆແລະໃຫ້ຢາປະຕິຊີວະນະ ເພາະວ່າເຂົາເຈົ້າເປັນຜູ້ທີ່ມີແນວ ໂນ້ມສູງ ທີ່ສຸດວ່າຈະເປັນຜູ້ຖືເຊື້ອແບັກທີເຣັຍ. ຢາປະຕິຊີວະນະນີ້ຈະກຳຈັດເຊື້ອແບັກທີເຣັຍອອກຈາກຮູຄໍແລະປ້ອງກັນ ບໍ່ໃຫ້ໂຣກນີ້ແຜ່ຜາຍ ໃຫ້ ຄົນອື່ນ. ຢາປະຕິຊີວະນະແບບກຳຈັດເຊື້ອນີ້ແຕກຕ່າງກັບຢາປະຕິຊີວະນະຊນິດອື່ນ ຊຶ່ງໃຊ້ປິ່ນປົວພະຍາດ ແລະ ຜູ້ທີ່ໄດ້ກິນຢາ ປະຕິຊີວະນະແບບກຳຈັດພະຍາດນີ້ກໍຍັງມີຄວາມສ່ຽງຢູ່ບາງສ່ວນ ຕໍ່ການເປັນພະຍາດ. ສະນັ້ນ ຜູ້ພົວພັນ**ທຸກໆຄົນ** ຄວນຮູ້ກ່ຽວກັບ ອາການ ຂອງໂຣກເຍື່ອຫຸ້ມສມອງອັກເສບນີ້ ແລະ ຄວນໄປຫາໝໍໂດຍດ່ວນຖ້າອາການເຫຼົ່ານີ້ປາກົດຂຶ້ນ.

## ຣາຍລະອຽດເພີ້ມເຕີມ - ຜແນກສາທາຣະນະສຸກແຫ່ງຣັດ NSW

ຖ້າທ່ານຕ້ອງການຣາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ທ່ານໝໍຂອງທ່ານ, ຜແນກສາທາຣະນະສຸກທ້ອງຖິ່ນ ຫຼື ສູນອະນາໄມຊຸມຊົນ - ໃຫ້ເບິ່ງພາຍໃຕ້ຫົວຂໍ້ຣັຖບານປະຈຳຣັດ *NSW Government* ທາງໜ້າຂອງສມຸດ ໂທຣະສັບ (White Pages).

| ເຂດໃນຕົວເມືອງ | ສະຖານທີ່ | ເລກໂທຣະສັບ | ເຂດຊົນນະບົດ | ສະຖານທີ່ | ເລກໂທຣະສັບ |
|---|---|---|---|---|---|
| **Northern Sydney/Central Coast** | Hornsby | 02 9477 9400 | **Greater Southern** | Goulburn | 02 4824 1837 |
| | Gosford | 02 4349 4845 | | Albury | 02 6080 8900 |
| **South Eastern Sydney/Illawarra** | Randwick | 02 9382 8333 | **Greater Western** | Broken Hill | 08 8080 1499 |
| | Wollongong | 02 4221 6700 | | Dubbo | 02 6841 5569 |
| **Sydney South West** | Camperdown | 02 9515 9420 | | Bathurst | 02 6339 5601 |
| **Sydney West** | Penrith | 02 4734 2022 | **Hunter/New England** | Newcastle | 02 4924 6477 |
| | Parramatta | 02 9840 3603 | | Tamworth | 02 6767 8630 |
| **Justice Health Service** | Matraville | 02 9311 2707 | **North Coast** | Port Macquarie | 02 6588 2750 |
| **NSW Department of Health** | Nth Sydney | 02 9391 9000 | | Lismore | 02 6620 7500 |
| **NSW Health: www.health.nsw.gov.au** | | | | | |

ກະຣຸນາເຂົ້າໄປເບິ່ງຣາຍລະອຽດທີ່ຄົບຖ້ວນຂອງຜແນກສາທາຣະນະສຸກໄດ້ທີ່
www.health.nsw.gov.au/publichealth/infectious/phus.asp